ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ

ກົມນະໂຍບາຍເງິນຕາ

ເລກທີ 663/ກນງ

ນະຄອນຫຼວງວຽງຈັນ, ວັນທີ 21 JUL 2015

ສໍານັກງານ ຄຄຊ
ລົງຮັບ ເລກທີ.....146.....
ວັນທີ.....23 JUL 2015
ໂທລະສັບ: 021 217770

## ແຈ້ງການ

**ເຖິງ:** ບັນດາທະນາຄານທຸລະກິດລັດ, ຮ່ວມທຶນ, ເອກະຊົນ, ໃນເຄືອ ແລະ ສາຂາຕ່າງປະເທດ

**ເລື່ອງ:** ການກໍານົດອັດຕາດອກເບ້ຍເງິນຝາກສະກຸນເງິນກີບຂອງທະນາຄານທຸລະກິດ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມຂໍ້ຕົກລົງກ່ຽວກັບການກໍານົດອັດຕາດອກເບ້ຍຂອງທະນາຄານທຸລະກິດ ສະບັບເລກທີ 529/ທຫລ, ລົງວັນທີ 21 ກໍລະກົດ 2015.

**ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ອອກແຈ້ງການ:**

1. ອັດຕາເງິນເຟີ້ສະເລ່ຍປີ 2014 ເທົ່າກັບ 4,13%.
2. ໃຫ້ທະນາຄານທຸລະກິດກໍານົດອັດຕາດອກເບ້ຍເງິນຝາກສະກຸນເງິນກີບ ແຕ່ລະປະເພດ ດັ່ງລຸ່ມນີ້:
   - ອັດຕາດອກເບ້ຍເງິນຝາກປະຢັດ ບໍ່ເກີນ 1,96%;
   - ອັດຕາດອກເບ້ຍເງິນຝາກ 3 ເດືອນ ບໍ່ເກີນ 3,34%;
   - ອັດຕາດອກເບ້ຍເງິນຝາກ 6 ເດືອນ ບໍ່ເກີນ 4,22%;
   - ອັດຕາດອກເບ້ຍເງິນຝາກ 12 ເດືອນ ບໍ່ເກີນ 6,13%;
   - ອັດຕາດອກເບ້ຍເງິນຝາກ 24 ເດືອນ ບໍ່ເກີນ 8,63%.
3. ໃຫ້ທະນາຄານທຸລະກິດລາຍງານສະພາບການຈັດຕັ້ງປະຕິບັດອັດຕາດອກເບ້ຍເງິນຝາກ, ເງິນກູ້ ແຍກສະກຸນເງິນ, ແຍກໄລຍະເວລາ, ແຍກຂະແໜງການ ໃຫ້ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ເປັນລາຍເດືອນ ພາຍໃນ 5 ວັນລັດຖະການຂອງເດືອນຖັດໄປ.
4. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ 3 ສິງຫາ 2015 ເປັນຕົ້ນໄປ.

**ຫົວໜ້າກົມນະໂຍບາຍເງິນຕາ**

ທະນາຄານແຫ່ງ ສປປ ລາວ ... ກົມນະໂຍບາຍເງິນຕາ

ຄໍາພຸດ ສິດທິລາດ

---